Diploma Programme
Programme du diplôme
Programa del Diploma

# Lao A: literature – Higher level – Paper 1
# Lao A : littérature – Niveau supérieur – Épreuve 1
# Laosiano A: literatura – Nivel superior – Prueba 1

Wednesday 4 May 2016 (afternoon)
Mercredi 4 mai 2016 (après-midi)
Miércoles 4 de mayo de 2016 (tarde)

2 hours / 2 heures / 2 horas

---

### Instructions to candidates

- Do not open this examination paper until instructed to do so.
- Write a literary commentary on one passage only.
- The maximum mark for this examination paper is **[20 marks]**.

### Instructions destinées aux candidats

- N'ouvrez pas cette épreuve avant d'y être autorisé(e).
- Rédigez un commentaire littéraire sur un seul des passages.
- Le nombre maximum de points pour cette épreuve d'examen est de **[20 points]**.

### Instrucciones para los alumnos

- No abra esta prueba hasta que se lo autoricen.
- Escriba un comentario literario sobre un solo pasaje.
- La puntuación máxima para esta prueba de examen es **[20 puntos]**.

2216 – 0581



© International Baccalaureate Organization 2016

International Baccalaureate
Baccalauréat International
Bachillerato Internacional

https://xtremepape.rs/

ໃຫ້ເຈົ້າວິຈານໃນແງ່ວັນນະຄະດີຫ**ນຶ່ງເລື່ອງ**ທີ່ເຈົ້າເລືອກຈາກສອງເລື່ອງຕໍ່ໄປນີ້

**1.**

ບັດນີ້ຈະກ່າວເຖິງນາຍກວຽນຜູ້ໜຶ່ງ ແຕ່ລະມື້ລາວຂີ່ກວຽນມາເຂົ້າປ່າຫາຕັດຟືນມາຂາຍ ວັນໜຶ່ງລາວເຂົ້າປ່າຫາຟືນ ກໍເລີຍພົ້ໜອງໃຫຍ່ທີ່ແຫ້ງຂອດ ລາວເຫັນແຂ້ໜຶ່ງໂຕໃຫຍ່ນອນກິ້ງເກືອກດີ້ນດັ່ນໃນໜອງແຫ້ງແລ້ງນັ້ນ ມັນອ້າປາກດ້ວຍຄວາມຫິວໂຫຍ ນາຍກວຽນກໍຖາມແຂ້ໂຕນັ້ນວ່າເປັນຫຍັງມຶງຈິ່ງບໍ່ໜີໄປຢູ່ໃນໜອງອື່ນບ່ອນມີນ້ຳມີປາພຸ້ນ ແຂ້ຕອບວ່າ ຂ້ອຍກໍຢາກໄປເຕັມທີ່ແຕ່ໄປບໍ່ໄດ້ ນາຍກວຽນຖາມຕື່ມວ່າ ຄັນກູເອົາມຶງໄປບ່ອນອື່ນທີ່ມີນ້ຳ ມີປາຫຼາຍພຸ້ນມຶງຈະຍິນດີໄປນຳກູບໍ່ ແຂ້ກໍຕອບວ່າ ຂ້ອຍຈະບໍ່ລືມບຸນຄຸນເຈົ້າດອກ ເມື່ອແຂ້ຍິນດີຕົກລົງແນວນັ້ນ ນາຍກວຽນກໍເອົາເຊືອກມັດແຂ້ຈົດເຂົ້າແລ້ວດຶ່ງຂຶ້ນໃສ່ກວຽນຈາກນັ້ນນາຍກວຽນຟ້າວໄປໜອງແຫ່ງໃໝ່ ພໍໄປຮອດແຄມໜອງໃຫຍ່ທີ່ມີນ້ຳໃສເຢັນນາຍກວຽນເອົາແຂ້ລົງປ່ອຍ ພໍໄດ້ຖືກນ້ຳໃໝ່ທີ່ໃສເຢັນແຂ້ກໍຄຶດຖ່ອຍຮ້າຍ ແລ້ວໂດດຄາບຂາງົວຂອງນາຍກວຽນໄວ້ເພື່ອຈະກິນງົວພ້ອມທັງນາຍກວຽນເປັນອາຫານ ນາຍກວຽນຈິ່ງເວົ້າຕໍ່ແຂ້ວ່າ ຖ້າມຶງຈະກິນກູ ກູກໍບໍ່ວ່າຫຍັງ ແຕ່ຂໍໃຫ້ມີຜູ້ຕັດສິນເສຍກ່ອນແລ້ວທັງສອງຈິ່ງພາກັນໄປ ພໍໄປພົບງູໃຫຍ່ໂຕໜຶ່ງ ທັງສອງກໍເລົ່າເລື່ອງລາວໃຫ້ງູໃຫຍ່ຟັງງູກໍຄຶດຢູ່ໃນໃຈວ່າ ກູຫາກເປັນເຊື້ອຊາດດຽວກັນກັບແຂ້ ກູຄວນຕັດສິນໃຫ້ແຂ້ເປັນຜູ້ຊະນະແລ້ວງູຕັດສິນໃຫ້ແຂ້ກິນນາຍກວຽນ ນາຍກວຽນບໍ່ຍອມຈິ່ງເດີນທາງຕໍ່ໄປເລີຍໄປພົ້ເຕົ່າໂຕໜຶ່ງເຕົ່າກໍຕັດສິນໃຫ້ແຂ້ກິນນາຍກວຽນຍ້ອນອາໃສຫາກິນຢູ່ໃນນ້ຳ ເກງວ່າແຂ້ຈະທຳລາຍຕົນນາຍກວຽນບໍ່ຍອມຈິ່ງພາກັນເດີນທາງຕໍ່ໄປ ກໍເລີຍພໍ່ງົວໂຕໃຫຍ່ ງົວໃຫຍ່ຄຶດໝ່າຍຊັງຄົນທີ່ໄດ້ຫາລຸນຝູງງົວເອົາໄປແກ່ກວຽນແກ່ໄຖ ຈິ່ງຕັດສິນໃຫ້ແຂ້ກິນນາຍກວຽນ ນາຍກວຽນບໍ່ພໍໃຈຈິ່ງເດີນທາງຕໍ່ໄປເລີຍພົ້ທ້າວສີວິໄຊແລ້ວທັງສອງເລົ່າເລື່ອງທຸກປະການ ທ້າວສີວິໄຊຖາມແຂ້ວ່າແຕ່ກ່ອນເຈົ້າເນົາຢູ່ໃສ ແຂ້ຕອບວ່າຂ້ອຍຫາກເນົາຢູ່ໜອງໃຫຍ່ວັງເລິກພຸ້ນແລ້ວ ມີປູປາອາຫານມາກມາຍຫຼາຍລົ້ນ ຈາກນັ້ນທ້າວສີວິໄຊກໍບອກໃຫ້ນາຍກວຽນເອົາເຊືອກມາມັດແຂ້ຄືນຄືເກົ່າເພື່ອຈະນຳປະໄວ້ໜອງເກົ່າທີ່ມັນເຄີຍຢູ່ ນາຍກວຽນກໍເອົາເຊືອກມັດແຂ້ຈົດເຂົ້າ ທ້າວສີວິໄຊຖາມແຂ້ວ່າແຕ່ຄາວກ່ອນນາຍກວຽນມັດເຈົ້າແໜ້ນເທົ່ານີ້ບໍ່ ແຂ້ຕອບວ່າ ນາຍກວຽນມັດຂ້ອຍແໜ້ນກວ່ານີ້ຫຼາຍເທົ່າ ທ້າວສີວິໄຊຈິ່ງບອກນາຍກວຽນໃຫ້ມັດແໜ້ນເຂົ້າເລື້ອຍໆ ຈົນວ່າແຂ້ຕາເຫຼືອກຕາຊັ້ນຂື້ນ ພໍໄປຮອດໜອງເກົ່າທີ່ແຂ້ເຄີຍຢູ່ທ້າວສີວິໄຊຫຼຽວເບິ່ງຮອບໆໜອງກໍບໍ່ເຫັນນ້ຳພໍຢອດນາຍກວຽນກໍລາກແຂ້ລົງຈາກກວຽນທັນທີ ທ້າວສີວິໄຊຮູ້ວ່າແຂ້ເປັນຜູ້ອະກະຕັນຍູ ທ້າວຈິ່ງບອກແຂ້ວ່າ ແຕ່ນີ້ຕໍ່ໄປມຶງຈົ່ງຢູ່ໃນໜອງເກົ່າແຫ່ງນີ້

ບໍ່ປາກົດຊື່ຜູ້ແຕ່ງ *ທ້າວສີວິໄຊ* (ບໍ່ປາກົດປີແຕ່ງ)

https://xtremepape.rs/

**2.**

ພໍຂູນເທືອງໄປເຖິງອຸດທະຍານສວນດອກ
ກໍກຫາກມີໝູ່ໄມ້ ໃນທັ່ນທີ່ນຫອມ
ຢູ່ລ້ອມອ້ອມທີ່ອຸດທະຍານ
ເປັນສະຖານນາຄີທີ່ມາຊົມໄມ້
ເປັນຂອງໄທ້ນາງ ທິດາລູກນາກ
ນາງນາກກໍຜັນໂຜນຜ່າຍ ກາຍມາຮີບດ່ວນ
ເຖິງສາລາລ່ວງຂື້ນບົນບ້ານບໍ່ນານ
ພໍແຕ່ຂື້ນຮອດບ້ານ ເລີຍແລຫຼໍ່າເຫັນ
ຂູນເທືອງເທິທ່ານມອງເມີນຍ້ຽມ
ນາງໄດ້ເຫັນດັ່ງນັ້ນ ເລີຍຟ້າວກ່າວຈາ
ດູລາເຈົ້າ ຈອມໝໍ່ແນວຄົນ
ທ່ານຫາກມີການຫຍັງ ຈັ່ງມາເມືານີ້
ຫຼືວ່າ ມີການໃຊ້ແນວໃດໂດຍດ່ວນ
ຢູ່ປະເທດໃດແດນດ້າວທີ່ໃດມາ
ສັງເລົ່າມາເຮືອນງູເງືອກແນວນາມກ້າ
ຈັກມາຕາຍຄ້າງ ກາງເຮືອນບໍ່ສົງເສັຍແລ້ວ
ເຮົາຈັກກິນທ່ານໄທ້ ດຽວນີ້ດ່ວນພະລັນແທ້ແລ້ວ
ບໍ່ຢ່າງນັ້ນ ໃຫ້ເຈົ້າຮີບດ່ວນໜີ
ເຮົາຈັກກິນທ່ານແທ້ ບໍ່ທັນສັ່ງໄຜ ແທ້ແລ້ວ
ແຕ່ນັ້ນຂູນເທືອງທ້າວ ທັນທີຂານຕອບ
ບໍ່ມີທາງໂລບລ້ຽວເລັ້ນຫຼາຍພາງ
ການທີ່ພີ່ທ່ຽວທາງດັ້ນ ສັນຈອນເຈັຍລະຈາກມານີ້
ເພາະຄະນຶງຮອດນ້ອງຈັ່ງມາ
ພີ່ໄດ້ຍິນຂ່າວວ່າເຈົ້າເປັນນາງນາກງູ
ດູເງົາງາມກວ່າເທວະດາດ້າວ
ພີ່ບໍ່ໄດ້ປອງຫາຕົ້ມ ບໍ່ຫວັງພາງໃຫ້ຕົກຫຼົ່ມ
ພີ່ບໍ່ມາລໍ້ໃຫ້ນາງລົ້ມໃສ່ໜາມດອກນາ
ຮັກປານໃດພີ່ກໍໝັ່ນໜາມສົນພີ່ກໍຝ່າ
ປ່າຊີ້ອື້ນຕັນໜ້າພີ່ກໍຖາງ
ພີ່ບໍ່ຫວາງນາງໄວ້ໜີໄປເປັນໃໝ່
ຄັນບໍ່ໄດ້ມື້ນີ້ ຕົນອ້າຍແມ່ນບໍ່ໜີນ້ອງເອີຍ

ບໍ່ປາກົດຊື່ຜູ້ແຕ່ງ *ນິທານຂູນທືງຂູນເທືອງ* (ບໍ່ປາກົດປີແຕ່ງ)

https://xtremepape.rs/